**ບົດຖະແຫຼງຂ່າວ**
**ຄວາມພ້ອມ ກອງປະຊຸມໂຕະມົນ ປະຈຳປີ 2024**
**ຂອງ ທ່ານ ນາງ ພອນວັນ ອຸທະວົງ ຮອງລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ**
**ໃນພິທີພົບປະນັກຂ່າວ ກ່ຽວກັບການກະກຽມຈັດກອງປະຊຸມໂຕະມົນ ປະຈຳປີ 2024**

*ວັນທີ 4 ພະຈິກ 2024*

**ຮຽນ:**

- **ທ່ານ ບັກໂຮເດຍ ເບີຄະນ໋ອຟ, ຜູ້ປະສານງານອົງການ ສປຊ ປະຈຳ ສປປ ລາວ**
- **ທ່ານ ນ ມາຕິນ ເຫເຣີ ຜູ້ຕາງໜ້າອົງການ ສປຊ ເພື່ອການພັດທະນາ**
- **ບັນດາທ່ານ ຫົວໜ້າກົມ, ຮອງຫົວໜ້າກົ**
- **ບັນດາທ່ານ ຜູ້ຕາງໜ້າຈາກສຳນັກຂ່າວ ແລະ ສື່ມວນຊົນ**

ຂ້າພະເຈົ້າມີຄວາມປິຕິຊົມຊື່ນ ແລະເປັນກຽດຢ່າງສູງ ທີ່ໄດ້ຮ່ວມກັບ **ທ່ານ ບັກໂຮເດຍ ເບີຄະນ໋ອຟ, ຜູ້ປະສານງານ ອົງການສະຫະປະຊາຊາດ ປະຈຳ ສປປ ລາວ** ຕ້ອນຮັບບັນດາທ່ານຜູ້ຕາງໜ້າ ສື່ມວນຊົນ ແລະບັນດາທ່ານແຂກຜູ້ມີກຽດ ເຂົ້າສູ່ພິທີພົບປະນັກຂ່າວ ເພື່ອແຈ້ງກ່ຽວກັບຄວາມພ້ອມໃນການຈັດກອງປະຊຸມໂຕະມົນ ປະຈຳປີ 2024 ພາຍໃຕ້ຫົວຂໍ້: ***"ເພີ່ມທະວີການເປັນຄູ່ຮ່ວມ ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ຂອງ ສ ປປ ລາວ"***

ອີງຕາມ ການຊີ້ນຳຂອງ ພະນະທ່ານ ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ, ປະທານຄະນະຊີ້ ນຳລະດັບຊາດ ເພື່ອຂະບວນການໂຕະມົນ ໃນການເຫັນດີໃຫ້ ຈັດກອງປະຊຸມໂຕະມົນ ປະຈຳປີ 2024 ໃນວັນທີ 14 ພະຈິກ 2024 ທີ່ ຫໍປະຊຸມແຫ່ງຊາດ ນະຄອນຫຼວງວຽງຈັນ.

ຂ້າພະເຈົ້າຂໍຖືໂອກາດອັນສະຫງ່າລາສີນີ້ ແຈ້ງໃຫ້ບັນດາທ່ານຊາບວ່າ ກອງປະຊຸມໂຕະມົນປະ ຈຳປີ 2024 ນີ້ ຈະໄດ້ສົນທະນາ ແລະປຶກສາຫາລື ກ່ຽວກັບຜົນສຳເລັດ ແລະ ຄວາມຄວາມຄືບໜ້າໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ປະຈຳປີ 2024, ແຜນບູລິມະສິດ ປີ 2025 ກໍ່ຄືບູລິມະສິດ ໃນການຈັດຕັ້ງປະຕິບັດ ທ້າຍສະໄໝຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025) ແລະ ນຳສະເໜີກ່ຽວກັບການສ້າງແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ X (2026-2030), ກອງປະຊຸມໂຕະມົນ ປະຈຳປີ 2024 ຈະເປັນເວທີໃນການທົບທວນການຈັດຕັ້ງປະຕິບັດບັນດາຍຸດທະສາດ, ແຜນປະຕິບັດງານ, ມະຕິຄຳສັ່ງຂອງລັດຖະບານ ແລະສິ່ງທ້າທາຍຕ່າງໆທີ່ສັງຄົມໃຫ້ຄວາມສົນໃຈ ເພື່ອຊອກວິທີການ ແລະມາດຕະການແກ້ໄຂ ສະພາບຄວາມຫຍຸ້ງຍາກທາງດ້ານເສດຖະກິດ ແລະ ການເງິນ ເພື່ອແກ້ໄຂສະພາບເສດຖະກິດ ຂອງ ສປປລາວ ແລະ ປັບປຸງຊີວິດການເປັນຢູ່ ຂອງປະຊາຊົນລາວບັນດາເຜົ່າ, ການລຶບລ້າງຄວາມທຸກຍາກ ແລະ ຊຸກຍູ້ການພັດທະນາຊັບພະຍາກອນມະນຸດໃນໄລຍະຍາວ. ໃນປີນີ້ ລັດຖະບານ ແຫ່ງ ສປປ ລາວ ຈະເຊື້ອເຊີນຜູ້ແທນກອງປະຊຸມເຂົ້າຮ່ວມ ຫຼາຍກວ່າ 300 ທ່ານ ເຊິ່ງໃນນັ້ນ ປະກອບມີ ກະຊວງຂະແໜງການ, ອົງການທຽບເທົ່າກະຊວງ ລວມທັງ 17 ແຂວງ ແລະ 01 ນະຄອນຫຼວງ, ບັນດາປະເທດເພື່ອນມິດສາກົນ, ຄູ່ຮ່ວມພັດທະນາ, ອົງການຈັດຕັ້ງທາງສັງຄົມ, ພາກເອກະຊົນ, ອົງການບໍ່ຫວັງຜົນກຳໄລ ແລະ ພາກສ່ວນທີ່ກ່ຽວຂ້ອງອື່ນໆ.

**ບັນດາທ່ານ ແຂກຜູ້ມີກຽດ ທ່ານຍິງ ແລະ ທ່ານຊາຍ,**

ປີ 2024 ເປັນປີທີ່ມີຄວາມໝາຍຄວາມສຳຄັນຢ່າງຍິ່ງ, ເນື່ອງຈາກເປັນປີທີ່ພວກເຮົາກຳລັງຢູ່ໃນໄລຍະທ້າຍສະໄໝ ຂອງການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ IX (2021-2025) ແລະເປັນປີ ທີ່ພວກເຮົາພວມກະກຽມສ້າງແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ X ເຊິ່ງລັດຖະບານ ໄດ້ສຳເລັດຮ່າງທີ່ 3 ຂອງແຜນດັ່ງກ່າວເປັນທີ່ຮຽບຮ້ອຍແລ້ວ, ພ້ອມດຽວກັນນີ້, ພວກເຮົາໄດ້ສຸມໃສ່ຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ IX ໃນອີກ 01 ປີ (ປີ

2025) ທີ່ຍັງເຫຼືອ ພາຍໃຕ້ສະພາບການທີ່ທ້າທາຍຫຼາຍທີ່ສຸດ ອັນເນື່ອງມາຈາກຫຼາຍປັດໃຈ ເຊັ່ນ:

- ສະພາບເສດຖະກິດໂລກທີ່ມີການຜັນແປ ແລະ ສັບສົນ, ອັດຕາເງິນເຟີ້ ແລະຄ່າຄອງຊີບແພງ, ຜົນກະທົບຈາກໄພນໍ້າຖ້ວມ ແລະອື່ນໆ;
- ບົນພື້ນຖານ ທີ່ງົບປະມານມີຄວາມຈໍາກັດ ແລະຄວາມຕ້ອງການດ້ານການພັດທະນາທີ່ມີ ຈໍານວນຫຼວງຫຼາຍ, ດັ່ງທີ່ໄດ້ກໍານົດໄວ້ໃນວາລະແຫ່ງຊາດ ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ, ພວກເຮົາກໍ່ໄດ້ສູ້ຊົນຈັດຕັ້ງປະຕິບັດ ວຽກງານຍຸດທະສາດດ້ານການເງິນພາຍໃຕ້ ແຜນພັດທະນເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ IX (2021-2025) ແລະຍຸດທະສາດອື່ນໆ;

ຄ່ຽງຄູ່ກັນນີ້, ລັດຖະບານ ສປປ ລາວ ກໍ່ຍັງສືບຕໍ່ເອົາໃຈໃສ່ຈັດຕັ້ງຜັນຂະຫຍາຍບັນດາເປົ້າໝາຍຕ່າງໆ ຂອງການພັດທະນາແບບຍືນຍົງ (SDGs) ໂດຍສະເພາະ ການຈັດຕັ້ງປະຕິບັດເປົ້າໝາຍ ທີ່ຕິດພັນກັບການປັບປຸງສະພາບເສດຖະກິດໃຫ້ມີຄວາມໝັ້ນທ່ຽງ-ຍືນຍົງ ແລະ ຊັບສິນດ້ານມະນຸດ ທີ່ເຫັນວ່າເປັນສິ່ງທ້າຍໃນການພັດທະນາປະເທດຊາດ ເຊິ່ງວຽກງານດັ່ງກ່າວກໍ່ນອນຢູ່ໃນ ບົດລາຍລາຍງານແບບສະ ໝັກໃຈ ຄັ້ງທີ III (VNR3) ທີ່ພວກເຮົາໄດ້ລາຍງານ ໃນກອງປະຊຸມເວທີການເມືອງລະດັບສູງຂອງ ອົງການສະຫະປະຊາຊາດ ທີ ນິວຢອກ, ສ. ອາເມລິກາ ໃນເດືອນ ກໍລະກົດ 2024 ທີ່ຜ່ານມາ ແລະການຈັດຕັ້ງປະຕິບັດແຜນຍຸດທະສາດການຂ້າມຜ່ານຂອງ ສປປ ລາວ ເພື່ອອອກຈາກສະຖານະພາບການເປັນປະເທດດ້ອຍພັດທະນາ (LDC) ໃນປີ 2024 ແລະຫຼັງ ປີ 2026 ລວມທັງການຜັນຂະຫຍາຍຜົນກອງປະຊຸມສຸດຍອດແຫ່ງອະນາຄົດ ກໍ່ເປັນວຽກບູລິມະສິດສໍາຄັນທີ່ພວກເຮົາຕ້ອງໄດ້ເອົາໃຈໃສ່.

ທັງໝົດທັງມວນທີ່ກ່າວມານັ້ນ, ກອງປະຊຸມໂຕະມົນ ໃນປີນີ້ ຈຶ່ງເປັນກາລະໂອກາດອັນດີ ຂອງລັດຖະບານ, ຄູ່ຮ່ວມພັດທະນາ ແລະພາກສ່ວນກ່ຽວຂ້ອງອື່ນໆ ໃນການປຶກສາຫາລື ກ່ຽວກັບຜົນສໍາເລັດ ໃນການຈັດຕັ້ງປະຕິບັດ ບູລິມະສິດ ຂອງແຜນພັດທະນເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ IX (2021-2025), ໂດຍສະເພາະແມ່ນ

ຜົນສຳເລັດໃນການຈັດຕັ້ງປະຕິບັດແຜນບູລິມາສິດ ປີ 2024 ແລະທິດທາງຂອງແຜນປີ 2025 ເຊິ່ງເປັນປີມ້ວນທ້າຍຂອງແຜນພັດທະນາດັ່ງກ່າວ, ການແລກປ່ຽນກ່ຽວກັບຄວາມຕ້ອງການ ໃນການເພີ່ມທະວີການເປັນຄູ່ຮ່ວມເພື່ອການພັດທະນາ ທີ່ມີປະສິດທິຜົນ ໃນໄລຍະການຟື້ນຟູເສດຖະກິດຂອງ ສປປ ລາວ.

*ບັນດາທ່ານສົມອນຊົນ-ແຂກທີ່ມີກຽດທັງຫຼາຍ*

ຂ້າພະເຈົ້າ ຂໍແຈ້ງໃຫ້ທ່ານຊາບວ່າ ກອງປະຊຸມໂຕະມົນປະຈຳປີ 2024 ແມ່ນຈະໄດ້ນຳສະເໜີ ກ່ຽວກັບຫົວຂໍ້ທີ່ສຳຄັນດັ່ງນີ້:

1. ບູລິມະສິດທ້າຍສະໄໝຂອງ ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ IX (2021-2025) ແລະການກະກຽມແຜນພັດ ທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X (2026-2030);
2. ບົດລາຍງານ ແຫ່ງຊາດ ແບບສະໝັກໃຈ ຄັ້ງທີ III (VNR3) ແລະ ຄວາມຄືບໜ້າ ໃນການຈັດຕັ້ງປະຕິບັດ ແຜນຍຸດທະສາດການຂ້າມຜ່ານຂອງ ສປປ ລາວ ເພື່ອອອກຈາກສະຖານະພາບປະເທດດ້ອຍພັດທະນາ ໃນປີ 2024 ແລະຫຼັງປີ 2026. ແລະຜົນກອງປະຊຸມສຸດຍອດແຫ່ງອະນາຄົດ;
3. ການຮ່ວມມືເພື່ອການພັດທະນາ (ຜົນການສຳຫລວດຮອບວຽນທີ 4 ຂອງການເປັນຄູ່ຮ່ວມ ເພື່ອການພັດທະນາທີ່ມີປະສິດທິຜົນ ແລະຜົນການທົບທວນແຜນດຳເນີນງານຖະແຫຼງການວຽງຈັນ ວ່າດ້ວຍການເປັນຄູ່ຮ່ວມ ເພື່ອການພັດທະນາ ທີ່ມີປະສິດທິຜົນ).

ນອກຈາກການນຳສະເໜີ 3 ບົດທີ່ກ່າວມາຂ້າງເທິງນີ້ແລ້ວ, ຢູ່ກອງປະຊຸມໂຕະມົນປີນີ້ ຈະໄດ້ພ້ອມກັນປຶກສາຫາລື ໃນບັນເດັນທີ່ສຳຄັນຂອງຊາດ 2 ຫົວຂໍ້ຄື:

1) ທິດທາງໄລຍະສັ້ນ ແລະໄລຍະຍາວ ໃນການແກ້ໄຂສະພາບຄວາມຫຍຸ້ງຍາກທາງດ້ານເສດ ຖະກິດ-ການເງິນ ເພື່ອບັນ ລຸເປົ້າໝາຍການພັດທະນາເສດກິດຂອງ ສປປ ລາວ ໃຫ້ມີຄວາມຍືນຍົງ, ສີຂຽວ, ເຊື່ອມໂຍງ-ເຊື່ອມຈອດ ແລະມີຄວາມຫຼາກຫຼາຍທາງດ້ານເສດຖະກິດ;

2) ທິດທາງໄລຍະສັ້ນ ແລະໄລຍະຍາວ ໃນການພັດທະນາຊັບພະຍາກອນມະນຸດຂອງ ສປປ ລາວ (ການນຳໃຊ້ທ່າແຮງຂອງປະຊາກອນໜຸ່ມ ໃນການພັດທະນາໃຫ້ມີຄວາມຍືນຍົງ).

ການກະກຽມ ກອງປະຊຸມໂຕະມົນໃນປີນີ້ ໄດ້ຮັບການນຳພາ-ຊີ້ນຳຢ່າງໃກ້ຊິດ ຈາກພະນະທ່ານນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ປະທານຄະນະຊີ້ນຳລະດັບຊາດ ເພື່ອຂະບວນການໂຕະມົນ.

ກະຊວງ ແຜນການ ແລະ ການລົງທຶນ ຮ່ວມກັບ ຫ້ອງການຜູ້ປະສານງານອົງການສະຫະປະຊາຊາດ ແລະອົງການສະຫະປະຊາຊາດເພື່ອການພັດທະນາ ປະຈຳ ສປປ ລາວ ໄດ້ເຮັດວຽກຮ່ວມກັນຢ່າງໃກ້ຊິດ ກັບບັນດາກະຊວງຂະແໜງການ, ທ້ອງຖິ່ນ, ປະເທດເພື່ອນມິດ, ຄູ່ຮ່ວມພັດທະນາ ແລະພາກສ່ວນກ່ຽວຂ້ອງອື່ນໆ ໃນການກະກຽມ ແລະ ຈັດກອງປະຊຸມໂຕະມົນໃນປີນີ້ ເຮັດໃຫ້ການກະກຽມກອງປະຊຸມໂຕະມົນ ປະຈຳປີ 2024 ພ້ອມແລ້ວເກືອບ 100 ເປີເຊັນ.

ຂ້າພະເຈົ້າ ໃນນາມຕາງໜ້າ ໃຫ້ລັດຖະບານ ແຫ່ງ ສປປ ລາວ ກໍ່ຄືຄະນະຊີ້ນຳລະດັບຊາດ ເພື່ອຂະບວນການໂຕະມົນ ເຊື່ອໝັ້ນເປັນຢ່າງຍິ່ງວ່າ ກອງປະຊຸມໂຕະມົນ ປະຈຳປີ 2024 ຈະປະສົບຜົນສຳເລັດ ແລະໄດ້ຮັບໝາກຜົນຢ່າງຈົບງາມ ຕາມເປົ້າໝາຍທີ່ວາງໄວ້. ຂ້າພະເຈົ້າຫວັງຢ່າງຍິ່ງວ່າ ທຸກພາກສ່ວນຈະເຂົ້າຮ່ວມກອງປະຊຸມດັ່ງກ່າວ ຢ່າງຕັ້ງໜ້າ ແລະປະກອບສ່ວນແລກປ່ຽນຄຳຄິດເຫັນຢ່າງມີສີສັນ, ກົງໄປກົງມາ ເພື່ອເຮັດໃຫ້ນະໂຍບາຍການພັດທະນາ ສປປ ລາວ ໄດ້ຮັບການຈັດຕັ້ງປະຕິບັດຢ່າງມີປະສິດທິຜົນ ແລະສົມບູນແບບທີ່ສຸດ ລວມທັງ ສະໜັບສະໜູນດ້ານຊັບພະຍາກອນຕ່າງໆທີ່ຈຳເປັນ ເພື່ອປະກອບສ່ວນຊຸກຍູ້ການຈັດຕັ້ງປະຕິບັດວາລະການພັດທະນາແຫ່ງຊາດ ກໍ່ຄືແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດຂອງ ສປປລາວ ໃຫ້ມີປະສິດທິພາບ-ປະສິດທິຜົນສູງ ແລະນຳເອົາຜົນປະໂຫຍດທີ່ຈັບຕ້ອງໄດ້ ໄປສູ່ປະຊາຊົນຢ່າງແທ້ຈິງ.

ທ້າຍສຸດນີ້, ຂ້າພະເຈົ້າຂໍສະແດງຄວາມຂອບໃຈ ມາຍັງສື່ມວນຊົນ ແລະບັນດາທ່ານທີ່ເຂົ້າຮ່ວມ ພິທີ ແລະບັນດາທ່ານທີ່ຮັບຊົມທາງໂທລະພາບ, ໜັງສືພິມ ແລະຜ່ານຊ່ອງທາງ

ສື່ສານອື່ນໆ ທີ່ໄດ້ໃຫ້ຄວາມສົນໃຈ ແລະຕິດຕາມການເຄື່ອນໄຫວຂອງວຽກງານຂະບວນການໂຕະມົນ ຕະຫຼອດມາ ອັນເປັນການປະກອບສ່ວນອັນໃຫຍ່ຫຼວງ ແລະສຳຄັນ ຕໍ່ວຽກງານຂະບວນການໂຕະມົນ ກໍ່ຄືວຽກງານການພັດທະນາຂອງ ສປປ ລາວ ຂອງພວກເຮົາໃຫ້ປະສົບຜົນສຳເລັດ ຢ່າງຈົບງາມ.

ຂໍຂອບໃຈ.